# ແຜນການສອນ
## ບົດຮຽນໂຮງຮຽນວັນອາທິດ
### ວັນອາທິດ ທີ 29 ຕຸລາ 2006 ( 10-29-2006 )

## ຍຶດຖືເອົາຄວາມອົດທົນ

**ຂໍ້ພຣະຄັມພີໃນບົດຮຽນ:** 2 ຕມທ 3:1,10-17; 4: 5-8

**ຄວາມຈິງໃນພຣະຄັມພີ:** ຄວາມອົດທົນເປັນເຄື່ອງໝາຍຂອງຄົນເຊື່ອທີ່ຕິດຕາມພຣະຄຣິດ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ແມ່ນເພື່ອຊ່ອຍເຫລືອທ່ານຈັດຕຽມຊີວິດຈິງດ້ວຍ:

- ວາງແຜນຢ່າງໃດເພື່ອຈະຕອບສນອງຕໍ່ການກົດດັນທີ່ຢາກໃຫ້ທ່ານປະນີປະນອມຄວາມເຊື່ອຂອງທ່ານ.
- ຍອມທີ່ຈະອົດທົນໃນຄວາມເຊື່ອຖື.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນໍາຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນໍາໄປສອນ
4. ອ່ານ "**ແຜນການສອນ**", ໝາຍບ່ອນສໍາຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສໍາເນົາ) ບົດຮຽນ ໃຫ້ພຽງພໍກັບຈໍານວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສໍາຣວດຈໍານວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈໍາ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄໍາພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**ບົດນໍາ:**

1. **ເລົ່າເຣື່ອງ:** ນາງໂລແຮນ ແວກເກັຽ ອີມີລ ຍິງສາວຄຣິສຕຽນອາຍຸ 15 ປີ ຮຽນຢູ່ໂຮງຮຽນມັທຍົມ ຖືກພວກມຸສລິມລັກພາຕົວໄປ ຈາກເມືອງ ອາລ ໂຄບຣາ ປະມານ 60 ໄມລ໌ ຢູ່ທາງທິດເໜືອຂອງກຸງໄຄໂຣ, ປະເທດເອຢິບ ຕາມລາຍງານບອກວ່າ ອີມີລ ໄດ້ຖືກບັງຄັບໃຫ້ເຊົາເຊື່ອໃນພຣະເຢຊູ ແລະຮັບເອົາສາສນາອິສລາມ. ຜູ້ເປັນພໍ່ແມ່ໄດ້ລາຍງານຕໍາຣວດໃນວັນທີ 3 ຕຸລາ ເພື່ອໃຫ້ກຸ່ມມຸສລິມສົ່ງລູກສາວຂອງເຂົາເຈົ້າຄືນ. ອີມີລ ຖືກຂົ່ມຂູ່ຈະໃຫ້ກິນຢາເສບຕິດ, ແລະຈະຖືກຂົ່ມຂືນ ຖ້າລາວຫາກປະຕິເສດບໍ່ຮັບເອົາສາສນາອິສລາມ. ໃນຊ່ວງນັ້ນຜູ້ທີ່ລັກພານາງໄດ້ພາກັນໄປອ້ອນວອນໃນວັນຣາມາດາ ນາງຈຶ່ງຕັດສິນໃຈລັກໜີກັບຄືນມາບ້ານ. ກ່ອນໜ້ານັ້ນພວກມຸສລິມຍັງໄດ້ສົ່ງຈົດໝາຍໄປຍູ່ພໍ່ແມ່ຂອງ ອີມີລ ວ່າ ຖ້າລູກສາວຂອງເຂົາເຈົ້າຄືນນີ້ບໍ່ຍອມຮັບເອົາສາສນາອິສລາມ ພວກເຂົາກໍຈະລັກເອົາລູກສາວຂອງເຂົາເຈົ້າເທື່ອລະຄົນໄປຈົນໝົດ. ນາງອີມີລ ໄດ້ເວົ້າກັບຕໍາຣວດວ່າຖ້າລາວບໍ່ຕັດສິນໃຈລັກໜີຈາກພວກມຸສລິມ ລາວກໍຄົງບໍ່ເຫັນໜ້າພໍ່ແມ່ຂອງລາວອີກ. ( The Voice of the Martyrs )

**ຄຳຖາມ:** ທ່ານປລາດໃຈບໍ່ໃນເຣື່ອງທີ່ເລົ່າມານີ້? ທ່ານຄິດແນວໃດ ທີ່ຄຣິສຕຽນຄອບຄົວນີ້ ແລະຄຣິສຕຽນອື່ນໆ ໃນໂລກທີ່ຖືກຂົ່ມເຫັງຈະສາມາດອົດທົນໄດ້? ຖ້າເປັນທ່ານ, ຈະສາມາດອົດທົນຕໍ່ສະພາບການດັ່ງກ່າວນີ້ໄດ້ບໍ່?
**ອະທິບາຍ:** ບົດຮຽນໃນວັນນີ້ຈະໃຫ້ຄຳແນະນຳພວກເຮົາໃຫ້ມີຄວາມອົດທົນ ດັ່ງນັ້ນພວກເຮົາຈຶ່ງຈະຮູ້ໂຕ້ຕອບຕໍ່ການຖືກຂົ່ມເຫງໃຫ້ປະນີປະນອມຕໍ່ຄວາມເຊື່ອຂອງເຮົາ ແລະໃນເວລາດຽວກັນ ຈະເປັນການຊ່ອຍພວກເຮົາໃຫ້ມີການຕັດສິນໃຈທີ່ຈະເປັນຄົນທີ່ສັດຊື່.

## ຂ້ອຍຈະພັທນາຄວາມເຊື່ອໃຫ້ອົດທົນຕໍ່ຄວາມຍາກລຳບາກໄດ້ຢ່າງໃດ?

### 1. <u>ຄາດວ່າຈະພົບກັບຄວາມຍາກລຳບາກ</u> ( 2 ຕີໂມທຽວ 3:1,10-13 )

1) ຂໍໃຫ້ນັກຮຽນອາສາອ່ານ 2 ຕີໂມທຽວ 3:1,10-13
2) **ຄຳຖາມ:** ໂປໂລໄດ້ເວົ້າວ່າ ຕີໂມທຽວ ໄດ້ສັງເກດເບິ່ງຊີວິດຂອງເພິ່ນແນວໃດ?
3) **ອະທິບາຍ:** ສິ່ງທີ່ຈູງໃຈໂປໂລນັ້ນແມ່ນຈຸດປະສົງຂອງເພິ່ນໃນການປະກາດຂ່າວປະເສີດແກ່ຄົນທັງປວງ.
   **ຄຳຖາມ:** ແມ່ນຫຍັງເປັນສິ່ງຈູງໃຈທ່ານໃຫ້ປະກາດ?
4) **ອະທິບາຍ:** ຄຳວ່າ "**ຄວາມອົດທົນ**" ມາຈາກພາສາກຣີກ ທີ່ໂປໂລ ໃຊ້ສຳລັບຜູ້ທີ່ເຊື່ອເມື່ອເຂົາເຈົ້າປະເຊີນກັບຄວາມບໍ່ເປັນມິດແລະຖືກຂົ່ມເຫັງ. ຊຶ່ງຄຳນີ້ມີຄວາມໝາຍວ່າ ທົນຕໍ່ຄວາມກົດດັນ, ຕັ້ງໝັ້ນໃນຄວາມສັດຊື່, ຕັ້ງຢູ່ຢ່າງໝັ້ນຄົງ, ມີຄວາມອົດທົນ, ແລະມີຄວາມຫວັງ. ຢືນຢູ່ຢ່າງໝັ້ນຄົງບໍ່ປະຕິເສດທີ່ຈະຮັບໃຊ້ພຣະເຈົ້າເຖິງແມ່ນວ່າຈະຕົກຢູ່ໃນຄວາມຍາກລຳບາກ.
5. **ອະທິບາຍ:** ສ່ວນຫລາຍພວກເຮົາຈະລືມຄວາມທຸກລຳບາກທີ່ໂປໂລໄດ້ຮັບ. ໃຫ້ພວກເຮົາເບິ່ງອີກເທື່ອນຶ່ງເຖິງຄວາມທຸກລຳບາກຂອງເພິ່ນທີ່ເມືອງ ອັນຕີໂອກ, ເມືອງອີໂກນີອົນ ແລະ ເມືອງລີຊະທາ.
6. ໃຫ້ນັກຮຽນເລົ່າເຖິງສະພາບການທີ່ເມືອງ ອັນຕີໂອກ, ເມືອງອີໂກນີອົນ ແລະ ເມືອງລີຊະທາ. **ຄຳຖາມ:** ແມ່ນຫຍັງທີ່ເຮັດໃຫ້ໂປໂລສາມາດປະເຊີນກັບຄວາມຍາກລຳບາກນີ້ໄດ້? ແມ່ນຫຍັງທີ່ຊ່ອຍພວກເຮົາໃຫ້ສາມາດປະເຊີນກັບຄວາມຍາກລຳບາກໄດ້?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** 2 ຕີໂມທຽວ 3:1,10-13

1) ຄວາມຍາກລຳບາກອັນໃດທີ່ໂປໂລຕ້ອງທົນທຸກທໍຣະມານ?
2) ໃຜເປັນຜູ້ຊ່ອຍເພິ່ນໃຫ້ພົ້ນຈາກການຂົ່ມເຫັງເຫລົ່ານີ້?
3) ການຂົ່ມເຫັງແບບໃດທີ່ຄຣິສຕຽນທົ່ວໂລກກຳລັງປະເຊີນຢູ່ໃນເວລານີ້?
4) ຜູ້ເປັນຄຣິສຕຽນແລະການດຳເນີນຊີວິດຄຣິສຕຽນໃນອະເມຣິກາໄດ້ຖືກໂຈມຕີຫລືບໍ່? ພວກເຮົາຈະຕອບໂຕ້ຄືນແນວໃດ?

### 2. <u>ຮັບເອົາຄວາມຈິງຂອງພຣະເຈົ້າ:</u> ( 2 ຕີໂມທຽວ 3:14-17 )

1) ຂໍໃຫ້ອາສາອ່ານພຣະທັມ 2 ຕີໂມທຽວ 3:14-17
2) ຄຳຖາມ: ມີຂັ້ນຕອນອັນໃດແດ່ທີ່ພວກເຮົາຕ້ອງກະທຳເພື່ອຈະສືບຕໍ່ໃນຄວາມເຊື່ອ?
3) ໃຫ້ນັກຮຽນພິຈາຣະນາເບິ່ງແລະຂອບໃຈບຸກຄົນທີ່ໄດ້ຊ່ອຍຕົນໃຫ້ຮັກອົງພຣະຜູ້ເປັນເຈົ້າ.
4) **ອະທິບາຍ:** ພຣະຄັມພີຂໍ້ທີ 16 ໄດ້ສອນພວກເຮົາວ່າ ພຣະຄັມພີທຸກຕອນໄດ້ຮັບການຊົງບັນດົນໃຈຈາກພຣະເຈົ້າ,
   **ຄຳຖາມ:** ຖ້ອຍຄຳນີ້ໄດ້ຊີ້ໃຫ້ເຫັນເຖິງຄວາມຈິງໃນພຣະຄັມພີແນວໃດ?
5) **ຄຳຖາມ:** ໃນຂໍ້ທີ 16 ຂໍ້ພຣະຄຳເຮັດໃຫ້ເກີດປໂຍດ 4 ຢ່າງຄືແນວໃດແດ່? ເມື່ອນັກຮຽນຕອບຄຳຖາມນີ້ ໃຫ້ຂຽນໃສ່ກະດານໄວ້ຄື: ການສອນ, ການກ່າວຕັກເຕືອນວ່າກ່າວ, ການປັບປຸງແກ້ໄຂໃຫ້ຖືກຕ້ອງ, ການອົບຮົມໃນ

ທາງຊອບທັມ.

6) ຖ້າຫ້ອງຮຽນໃຫຍ່ໃຫ້ແບ່ງນັກຮຽນເປັນ 4 ກຸ່ມ ເອົາຫົວເຣື່ອງຂ້າງເທິງນີ້ໃຫ້ແຕ່ລະກຸ່ມເພື່ອແລກປ່ຽນຄວາມຄິດຄວາມເຫັນກັນວ່າ ແຕ່ລະຖ້ອຍຄຳມີຄວາມໝາຍຢ່າງໃດ ແລະສາມາດໃຊ້ໄດ້ກັບຄຣິສຕຽນສມັຍນີ້ຄືແນວໃດ? (ຖ້າຫ້ອງຮຽນນ້ອຍ ກໍໃຫ້ແລກປ່ຽນຄວາມຄິດເຫັນແຕ່ລະຫົວເຣື່ອງນຳກັນ, ຄຣູສອນອະທິບາຍເພີ້ມເຕີມ)

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** 2 ຕີໂມທຽວ 3:14-17

1. ເປັນຫຍັງຈຶ່ງເຫັນວ່າສຳຄັນ ທີ່ພວກເຮົາຕ້ອງເຊື່ອວ່າພຣະຄັມພີໄດ້ຮັບການຊົງບັນດົນໃຈຈາກພຣະເຈົ້າ?
2. ພວກເຮົາຈະຮັບຄວາມຄວາມຈິງຂອງພຣະເຈົ້າໄວ້ໃນຊີວິດຂອງພວກເຮົາຢ່າງໃດ?
3. ຂໍ້ພຣະຄັມພີເຮັດໃຫ້ເກີດປໂຍດ 4 ຢ່າງຄືແນວໃດແດ່? ອະທິບາຍແຕ່ລະຢ່າງ.

**3. <u>ອົດທົນຈົນເຖິງທີ່ສຸດ:</u>** ( 2 ຕີໂມທຽວ 4:5-8 )

1) ຂໍໃຫ້ນັກຮຽນອາສາອ່ານ 2 ຕີໂມທຽວ 4:5-8

2) ໃຫ້ນັກຮຽນແລກປ່ຽນຄວາມຄິດເຫັນວ່າຄຣິສຕຽນຈະເຮັດແນວໃດຕໍ່ສະຖານະການຊຶ່ງອາດຈະຊ່ອຍໃຫ້ເຂົາເຈົ້າປະກາດຂ່າວປະເສີດ.

3) **ອະທິບາຍ:** ພວກເຮົາຈະບໍ່ຢຸດຫລືຍົກເລີກໃນຍາມຍາກລຳບາກ ເພາະປໂຍດແລະຄວາມຫວັງຂອງເຮົາມີຢູ່ແລ້ວ, ພວກເຮົາຈະຕ້ອງອົດທົນຈົນເຖິງທີ່ສຸດເຫມືອນກັບໂປໂລ.

4) **ອະທິບາຍ:** ໂປໂລບອກຕີໂມທຽວໃຫ້ເຮັດວຽກການຮັບໃຊ້ໃຫ້ສຳເຣັດ. **ຄຳຖາມ:** ຜູ້ທີ່ເຊື່ອໃນສມັຍນີ້ຕ້ອງມີບາດກ້າວອັນໃດແດ່ເພື່ອຈະເຮັດວຽກການຮັບໃຊ້ໃຫ້ສຳເຣັດ.

5) ຖ້າທ່ານຫາກຮູ້ວ່າທ່ານໃກ້ຈະຮອດວັນສຸດທ້າຍ(ຕາຍ)ຂອງທ່ານ, ທ່ານຈະບອກກັບຄົນທີ່ທ່ານຮັກແພງທັງຫລາຍແນວໃດແດ່?

6) **ບອກເລົ່າ:** ໂປໂລເວົ້າວ່າເພິ່ນໄດ້ອົດສາສູ້ໃນການແຂ່ງຂັນ. **ຄຳຖາມ:** ເພິ່ນໝາຍຄວາມວ່າແນວໃດ? ບັນດາຜູ້ທີ່ເຊື່ອໃນສມັຍນີ້ຈະອົດສາສູ້ໃນການແຂ່ງຂັນຢ່າງໃດ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** 2 ຕີໂມທຽວ 4:5-8

1. ໂປໂລຮັກສາຄວາມເຊື່ອໃນຍາມຍາກລຳບາກໄວ້ໄດ້ຢ່າງໃດ?
2. ລາງວັນທີ່ໂປໂລຈະໄດ້ຮັບນັ້ນແມ່ນຫຍັງ?
3. ໃນຂໍພຣະຄຳທີ່ກຳລັງສຶກສາຢູ່ນີ້ ການແລ່ນແຂ່ງຂັນຂອງໂປໂລໝາຍເຖິງຫຍັງ?
4. ຕົວຢ່າງເຣື່ອງຄວາມອົດທົນຂອງໂປໂລໃນຍາມຍາກລຳບາກໄດ້ຊ່ອຍທ່ານແນວໃດ?

**<u>ສລູບ</u>:**

1. **ອະທິບາຍ:** ຜູ້ແລ່ນແຂ່ງອາດຈະທໍ້ຖອຍໃຈເມື່ອມີອຸປສັກຕ່າງໆ ຂັດຂວາງ ຫລືຢຸດແລ່ນກ່ອນຈະຮອດເສັ້ນຊັຍ, ແຕ່ວ່າໂປໂລ ໄດ້ເອົາໃຈສຸມໃສ່ແລະມຸ້ງໜ້າໄປສູ່ເປົ້າໝາຍ - ຄືມົງກຸດແຫ່ງຄວາມຊອບທັມ.
2. ຢ່າເຊົາ, ຢ່າຍົກເລີກ ເມື່ອເຮົາພົບກັບຄວາມຍາກລຳບາກໃນຊີວິດ
3. ລະນຶກຢູ່ສເມີວ່າ, ພຣະເຈົ້າບອກວ່າເຮົາຈະພົບກັບຄວາມຍາກລຳບາກ ແຕ່ເຮົາຕ້ອງອົດທົນເພື່ອໃຫ້ຄົນອື່ນເຫັນຄວາມ ເຊື່ອອັນແທ້ຈິງຂອງເຮົາ.
4. ເສັ້ນຊັຍແລະເປົ້າໝາຍຊີວິດຂອງເຮົານັ້ນຄື ມົງກຸດແຫ່ງຄວາມຊອບທັມ ຫລື ຊີວິດອັນຕລອດໄປເປັນນິດ
5. ອະທິຖານປິດຫ້ອງຮຽນ